ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຫົວພັນ

ເລກທີ..02..../ ຈຂ

ຊຳເໜືອ, ວັນທີ..26...ເມສາ 2013

# ຄຳສັ່ງ

ເຖິງ: ບັນດາເຈົ້າເມືອງ, ພະແນກການກ່ຽວຂ້ອງ, ຫົວໜ້າດ່ານພາສີເຂດ II ໃນຂອບເຂດແຂວງຫົວພັນ.

ເລື່ອງ: ໃຫ້ຄຸ້ມຄອງການເກັບຊື້ສັດ (ງົວ, ຄວາຍ) ຢູ່ ພາຍໃນແຂວງຫົວພັນ.

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນຂອງ ສປປ.ລາວ, ສະບັບເລກທີ 03 / ສພຊ, ລົງວັນທີ 21 / 10 /2012.
- ອີງຕາມ ຄຳສັ່ງຂອງລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0650/ ອຄ.ຄພນ, ລົງວັນທີ 01 ເມສາ 2013. ວ່າດ້ວຍການຄຸ້ມຄອງການເກັບຊື້ສັດເປັນ (ງົວ, ຄວາຍ) ຢູ່ ພາຍໃນແຂວງ, ນະຄອນຫລວງ.

ເພື່ອເຮັດໃຫ້ການສະໜອງສັດ (ງົວ, ຄວາຍ) ສຳລັບການບໍລິໂພກພາຍໃນແຂວງຫົວພັນໃຫ້ພຽງພໍຕາມຄວາມຕ້ອງການ, ປ້ອງກັນບໍ່ໃຫ້ລາຄາຊີ້ນງົວ, ຄວາຍ ເໜັງຕີງຢ່າງຮຸນແຮງ ຫລີກລ່ຽງການເອົາລັດເອົາປຽບຈາກພໍ່ຄ້າມີການທີ່ສ້າງຄວາມປັ່ນປ່ວນທາງດ້ານລາຄາ ແນໃສ່ຮັກສາສະຖຽນລະພາບທາງດ້ານເສດຖະກິດໃຫ້ມີຄວາມໝັ້ນຄົງ ທັງເປັນການປ້ອງກັນບໍ່ໃຫ້ມີຜົນກະທົບໄປສູ່ບັນຫາອື່ນທີ່ຈະກາຍເປັນການຫຍໍ້ທໍ້ໃນສັງຄົມ.

**ເຈົ້າແຂວງ ແຂວງຫົວພັນອອກຄຳສັ່ງ ດັ່ງນີ້:**

1. ໃຫ້ເພີ່ມທະວີການເອົາໃຈໃສ່ຄຸ້ມຄອງ, ຕິດຕາມກວດກາການເກັບຊື້ສັດ (ງົວ, ຄວາຍ) ຂອງນັກທຸລະກິດພາຍໃນ ແລະ ຕ່າງປະເທດ ຢ່າງເຂັ້ມງວດ. ບໍ່ອະນຸຍາດໃຫ້ບຸກຄົນ ຫລື ນິຕິບຸກຄົນຊາວຕ່າງປະເທດທີ່ບໍ່ມີໃບອະນຸຍາດ ຫລື ໃບທະບຽນທີ່ຖືກຕ້ອງເຂົ້າມາເກັບຊື້ສັດເປັນ (ງົວ, ຄວາຍ) ໃນຂອບເຂດຂອງແຂວງຫົວພັນ ເພື່ອສົ່ງອອກໄປຕ່າງປະເທດ ຈະແມ່ນການເກັບຊື້ດ້ວຍຮູບແບບຄົນຕ່າງປະເທດມາເລາະເກັບຊື້ເອງ, ເອົາທຶນໃຫ້ຜູ້ຕາງໜ້າ ຫລື ບຸກຄົນໃດໜຶ່ງພາຍໃນທີ່ບໍ່ມີທະບຽນໂດຍຖືກຕ້ອງເລາະເກັບຊື້ໃຫ້ຄືໄລຍະຜ່ານມາ ເຊິ່ງເປັນສາເຫດເຮັດໃຫ້ບໍ່ມີຄວາມສະຫງົບ ແລະ ຂາດຄວາມເປັນລະບຽບຮຽບຮ້ອຍໃນສັງຄົມຍ້ອນມີການປັ່ນປ່ວນແກ້ງແຍ່ງລາຄາເກັບຊື້. ຖ້າພົບເຫັນມີການລະເມີດແມ່ນໃຫ້ຢຶດ ຫລື ອາຍັດ ແລະ ປັບໃໝຕາມລະບຽບກົດໝາຍທີ່ວາງອອກ.

2. ໃຫ້ຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ, ເມືອງ, ອໍານາດການປົກຄອງທ້ອງຖິ່ນສ້າງເງື່ອນໄຂ ແລະ ເອື້ອອໍານວຍຄວາມສະດວກໃຫ້ແກ່ຜູ້ເກັບຊື້ພາຍໃນ (ນາຍຮ້ອຍ) ທີ່ໄດ້ຮັບອານຸຍາດຖືກຕ້ອງຕາມລະບຽບກົດໝາຍສາມາດເກັບຊື້ສັດເພື່ອສະໜອງໃຫ້ຕະຫລາດພາຍໃນແຂວງໃນສະເພາະໜ້ານີ້ ຫລື ເພື່ອສົ່ງອອກໃນອະນາຄົດ. ໃນສະເພາະໜ້ານີ້ໃຫ້ຢຸດການສົ່ງອອກສັດຊົ່ວຄາວກ່ອນຈົນກວ່າຈະມີຄໍາສັ່ງຍົກເລີກຄໍາສັ່ງສະບັບນີ້.

3. ໃຫ້ເຈົ້າໜ້າທີ່ດ່ານຊາຍແດນ, ເຈົ້າໜ້າທີ່ທຸກພາກສ່ວນທີ່ກ່ຽວຂ້ອງຂັ້ນເມືອງເພີ່ມທະວີສະກັດກັ້ນການລັກລອບນໍາສົ່ງສັດ (ງົວ, ຄວາຍ) ອອກໄປຕ່າງປະເທດຢ່າງເດັດຂາດ ໂດຍສະເພາະແມ່ນເຂດທີ່ມີຊາຍແດນຕິດຈອດກັບປະເທດ ສສ.ຫວຽດນາມ.

4. ໃຫ້ລາຍງານ ແລະ ຂໍທິດຊີ້ນໍາຈາກແຂວງ (ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ພະແນກກະສິກໍາ ແລະ ປ່າໄມ້ແຂວງ) ກ່ຽວກັບວິທີການ ແລະ ການຈັດຕັ້ງປະຕິບັດຄຸ້ມຄອງການເກັບຊື້ສັດ (ງົວ, ຄວາຍ) ຕົວຈິງທີ່ເໝາະສົມໃນທ້ອງຖິ່ນທີ່ຕົນເອງຮັບຜິດຊອບເປັນແຕ່ລະໄລຍະ.

5. ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ, ເມືອງ, ເຈົ້າໜ້າທີ່ປະຈໍາດ່ານ, ບ້ານ ຈົ່ງພ້ອມກັນຈັດຕັ້ງປະຕິບັດຄໍາສັ່ງສະບັບນີ້ຢ່າງເຂັ້ມງວດ ແລະ ມີຄວາມຮັບຜິດຊອບສູງ.

6. ຄໍາສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນນີ້ເປັນຕົ້ນໄປ, ບັນດາຄໍາສັ່ງ, ລະບຽບການ ແລະ ແຈ້ງການທີ່ຂັດກັບຄໍາສັ່ງສະບັບນີ້ລ້ວນແລ້ວແຕ່ຖືກຍົກເລີກ.

ຮ. ເຈົ້າແຂວງ ແຂວງຫົວພັນ

ດຣ.ຈັນແສງ ພົມມະວົງ

*ບ່ອນສົ່ງ:*

- ສະພາແຫ່ງຊາດເຂດ 8 01 ສະບັບ.
- ກວດກາລັດແຂວງ 01 ສະບັບ.
- ຫ້ອງວ່າການປົກຄອງເມືອງ 09 ເມືອງ ເມືອງລະ 01 ສະບັບ.
- ພະແນກອຸດສາຫະກໍາ ແລະ ການຄ້າແຂວງ 01 ສະບັບ.
- ພະແນກກະສິກໍາ ແລະ ປ່າໄມ້ແຂວງ 01 ສະບັບ.
- ດ່ານສາກົນນໍ້າໂສຍ 01 ສະບັບ.
- ດ່ານແຫ່ງຊາດ ແຫ່ງລະ 01 ສະບັບ.
- ສໍາເນົາ 02 ສະບັບ.